# ແມ່ຍິງທະນາຄານສະຫຼຸບຜົນການແຂ່ງຂັນແມ່ຍິງ 3 ດີ





ໃນວັນທີ 12 ພະຈິກນີ້ ທີ່ສະຖາບັນການທະນາຄານ ນະຄອນຫຼວງວຽງຈັນ, ຄະນະສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງການສະຫຼຸບຂະບວນການແຂ່ງຂັນແມ່ຍິງ 3 ດີ ສົກປີ 2006-2010 ແລະ ເປີດຂະບວນການແຂ່ງຂັນແມ່ຍິງ 3 ດີ ສົກປີ 2011-2015 ຢ່າງເປັນທາງການ ໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ຄະນະພັກທະນາຄານແຫ່ງ ສປປ ລາວ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ທ່ານ ນາງ ບັນດິດ ປະທຸມວັນ ຮອງປະທານສູນກາງສະຫະພັນແມ່ຍິງລາວ, ພ້ອມນີ້ກໍມີຄະນະພັກ-ຄະນະກົມ, ທະນາຄານທຸລະກິດ, ພະນັກງານປະຕິວັດອາວຸໂສເພດຍິງ, ຄະນະສະຫະພັນແມ່ຍິງຮາກຖານ, ສະມາຊິກສະຫະພັນແມ່ຍິງ ແລະ ຜູ້ຕາງໜ້າຂອງອົງການຈັດຕັ້ງຊາວໜຸ່ມ ແລະ ກຳມະບານເຂົ້າຮ່ວມ 1.000 ກວ່າຄົນ.

ໃນກອງປະຊຸມດັ່ງກ່າວ ທ່ານ ນາງ ວັດທະນາ ດາລາລອຍ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ກໍໄດ້ຕີລາຄາຄືນໝາກຜົນແຫ່ງການຈັດຕັ້ງປະຕິບັດຂະບວນການແຂ່ງຂັນແມ່ຍິງ 3 ດີ ສົກປີ 2006-2010 ຂອງສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ ໂດຍສະເພາະການຈັດຕັ້ງການແຂ່ງຂັນແມ່ນອີງໃສ່ແຈ້ງການຂອງສູນກາງສະຫະພັນແມ່ຍິງລາວ ກ່ຽວກັບການຜັນຂະຫຍາຍຂໍ້ແຂ່ງຂັນ 3 ດີ ຄື: ພົນລະເມືອງດີ ພັດທະນາດີ ແລະ ສ້າງຄອບຄົວດີມີຄວາມຜາສຸກເປັນມາດຖານໃນການກໍ່ສ້າງເອື້ອຍນ້ອງແມ່ຍິງ, ຜ່ານການເຄື່ອນໄຫວຕົວຈິງສາມາດຕີລາຄາປະເພດແມ່ຍິງ 3 ດີຄື: ໃນປີ 2008 ມີສະມາຊິກແມ່ຍິງ 3 ດີ 62,97%, ປີ 2009 ມີ 76,05% ແລະ ໃນປີ 2010 ມີ 79,38%, ຈາກນັ້ນກໍໄດ້ຍົກໃຫ້ເຫັນດ້ານດີ, ຂໍ້ຄົງຄ້າງ ແລະ ບັນດາບົດຮຽນທີ່ຖອດຖອນໄດ້ໃນໄລຍະເຄື່ອນໄຫວຜ່ານມາ.

ໃນເວລາຕໍ່ມາທ່ານຮອງປະທານສູນກາງສະຫະພັນແມ່ຍິງລາວ ກໍໄດ້ໃຫ້ກຽດມອບໃບຍ້ອງຍໍໃຫ້ແກ່ບັນດາສະຫະພັນແມ່ຍິງຮາກຖານ ທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວຈັດຕັ້ງປະຕິບັດການແຂ່ງຂັນແມ່ຍິງ 3 ດີ ແລະ ຈາກນັ້ນກໍໄດ້ວາງທິດທາງ-ແຜນການຂອງຂະບວນການ ແຂ່ງຂັນແມ່ຍິງ 3 ດີ ສົກປີ 2011-2015 ດ້ວຍບັນຍາກາດເບີກບານມ່ວນຊື່ນ ແລະ ມີຄວາມໝາຍສຳຄັນ.

ໃນຕອນທ້າຍທ່ານ ສອນໄຊ ສິດພະໄຊ ກໍໄດ້ຕາງໜ້າໃຫ້ຄະນະພັກ-ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕີລາຄາສູງຕໍ່ບົດບາດແຫ່ງການເຄື່ອນໄຫວຂອງເອື້ອຍນ້ອງແມ່ຍິງໃນຂົງເຂດທະນາຄານ ໂດຍສະເພາະໃນດ້ານການແຂ່ງຂັນແມ່ຍິງ 3 ດີ ກໍໄດ້ມີໝາກຜົນສຳເລັດອັນໜ້າເພິ່ງພໍໃຈ, ພິເສດເອື້ອຍນ້ອງແມ່ຍິງທະນາຄານ ຮູ້ຮັກສາວັດທະນະທຳຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສວຍງາມ, ຄຽງຄູ່ກັນນັ້ນກໍຍັງໄດ້ປະຕິບັດສິດສະເໝີພາບຍິງ-ຊາຍໃນຄອບຄົວ ແລະ ສັງຄົມ, ແມ່ຍິງຍັງໄດ້ປະກອບສ່ວນເຂົ້າໃນຄະນະນຳພາຂັ້ນຕ່າງໆກາຍເປັນກຳລັງທີ່ສຳຄັນໃນຂົງເຂດທະນາຄານ.

ພ້ອມດຽວກັນນັ້ນ, ທ່ານຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ຍັງໃຫ້ທິດຊີ້ນຳໂດຍບາງຕອນໄດ້ຊີ້ໃຫ້ຄະນະນຳແມ່ຍິງທຸກຂັ້ນ ຕ້ອງຖືເອົາວຽກງານສຶກສາອົບຮົມການເມືອງແນວຄິດເປັນວຽກທີ່ສຳຄັນຕິດພັນກັບການຈັດຕັ້ງເຊື່ອມຊຶມບັນດາມະຕິຕ່າງໆສະໄໝທີ IX ຂອງພັກ, ປັບປຸງກົງຈັກການຈັດຕັ້ງໃຫ້ເຂັ້ມແຂງ ໂດຍຕິດພັນກັບການສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ, ຂະຫຍາຍສະມາຊິກໃໝ່ຢ່າງຕໍ່ເນື່ອງ ແລະ ສ້າງສະມາຊິກແມ່ຍິງເຂົ້າເປັນສະມາຊິກພັກເພີ່ມຂຶ້ນ, ພ້ອມນີ້ກໍຕັ້ງໜ້າປະຕິບັດໜ້າທີ່ວິຊາສະເພາະຂອງຕົນໃຫ້ດີປະກອບສ່ວນເຂົ້າໃນການພັດທະນາລະບົບທະນາຄານສູ່ຄວາມໝັ້ນຄົງ ແລະ ທັນສະໄໝຍິ່ງໆຂຶ້ນ.